ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກົມສິ່ງແວດລ້ອມ

ເລກທີ 2136/ກຊສ.ກສລ

ນະຄອນຫຼວງວຽງຈັນ, ວັນທີ 28 JUL 2022

# ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ

**ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງແຜນຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ຂອງໂຄງການສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ ຈາກໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຫາຊາຍແດນ ລາວ-ຫວຽດນາມ ເມືອງດາກຈຶງ ແຂວງເຊກອງ ສະບັບເດືອນພຶດສະພາ 2022 ຂອງບໍລິສັດ ອິມແພກ ເອັນເນີຈີເອເຊຍ ດີວີລັບເມັ້ນ ຈຳກັດ**

- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ), ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສະບັບເລກທີ 21/ລບ, ລົງວັນທີ 31 ມັງກອນ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການມອບສິດໃຫ້ກົມສິ່ງແວດລ້ອມ ເຊັນໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ສະບັບເລກທີ 3931/ກຊສ, ລົງວັນທີ 26 ກໍລະກົດ 2022.

**ກົມສິ່ງແວດລ້ອມ ຕົກລົງ:**

1. ຮັບຮອງເອົາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແບບລະອຽດ ລວມທັງແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ ຂອງໂຄງການສາຍສົ່ງໄຟຟ້າແຮງສູງ 500 ກິໂລໂວນ ຈາກໂຄງການຜະລິດໄຟຟ້າຈາກກັງຫັນລົມ 600 ເມກາວັດ ຫາຊາຍແດນ ລາວ-ຫວຽດນາມ ເມືອງດາກຈຶງ ແຂວງເຊກອງ ສະບັບເດືອນພຶດສະພາ 2022 ໂດຍແມ່ນ ບໍລິສັດ ອິມແພັກ ເອັນເນີຈີເອເຊຍ ດີວີລັບເມັ້ນ ຈຳກັດ ທີ່ເປັນເຈົ້າຂອງໂຄງການ;
2. ເຈົ້າຂອງໂຄງການ ຕ້ອງປະຕິບັດຢ່າງເຂັ້ມງວດ ເນື້ອໃນບົດບັນທຶກ ວ່າດ້ວຍ ບັນດາເງື່ອນໄຂທີ່ກຳນົດໄວ້ເປັນເອກະສານຊ້ອນທ້າຍຂອງໃບຢັ້ງຢືນສະບັບນີ້ ແລະ ຖ້າຫາກບໍ່ປະຕິບັດໄດ້ໃນເງື່ອນໄຂໃດໜຶ່ງ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດພິຈາລະນາໂຈະ ຫຼື ຍົກເລີກ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຕາມລະບຽບການ;
3. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ມີຜົນນຳໃຊ້ໄດ້ຕະຫຼອດໄລຍະເວລາຈັດຕັ້ງປະຕິບັດໂຄງການ./

**ຫົວໜ້າກົມ**

ອຸ່ນເຮືອນ ໄຊຍະຈັກ